ບົດສັງລວມຫຍໍ້

ກໍລະກົດ 2021

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

MRLG MEKONG REGION LAND GOVERNANCE

# ການຮັບປະກັນໃນການເຂົ້າເຖິງ ແລະ ການຄຸ້ມຄອງປ່າໄມ້ ຕາມປະເພນີ ຂອງແມ່ຍິງ ໃນ ສປປ ລາວ

## ຂໍ້ຄວາມສຳຄັນ

- ລັດຖະບານລາວມີຄວາມຄາດຫວັງທີ່ຈະ**ຂະຫຍາຍເນື້ອທີ່ການປົກຫຸ້ມຂອງປ່າໄມ້ຜ່ານລະບົບການຄຸ້ມຄອງປ່າໄມ້**ໃນຂັ້ນເມືອງ ແລະ ຂັ້ນບ້ານ. ສິ່ງດັ່ງກ່າວໄດ້**ພາໃຫ້ເກີດສະຖານະການ ຂັດແຍ່ງກັນລະຫວ່າງການຄຸ້ມຄອງທີ່ດິນແບບເປັນທາງການ ແລະ ການຄຸ້ມຄອງທີ່ດິນຕາມປະເພນີ.**

- ໃນຂະນະທີ່**ກົດໝາຍໄດ້ພະຍາຍາມຮັບຮູ້ການປະຕິບັດຕາມປະເພນີ, ກົດຫມາຍວ່າດ້ວຍທີ່ດິນສະບັບໃຫມ່ (2019) ໄດ້ລົບລ້າງການລະບຸໃຫ້ມີຊື່ຮ່ວມລະຫວ່າງຜົວເມຍໃນໃບຕາດິນອອກ,** ສິ່ງນີ້ ໄດ້ລົດທອນການ ຮັບຮູ້ສິດກ່ຽວກັບທີ່ດິນຂອງແມ່ຍິງລົງ ຊຶ່ງເຮັດໃຫ້ບາງກຸ່ມທີ່ຢູ່ໃນລະບົບການປະຕິບັດ ການສືບທອດມໍຣະດົກຜ່ານທາງເພດຊາຍ ຕົກຢູ່ໃນຄວາມດ້ອຍໂອກາດ.

- ບົດສັງລວມຫຍໍ້ສະບັບນີ້ແມ່ນອີງໃສ່ ຜົນໄດ້ຮັບຂອງກໍລະນີສຶກສາ ກ່ຽວກັບສິດໃນການເຂົ້າເຖິງທີ່ດິນ ແລະ ການຄຸ້ມຄອງ ປ່າໄມ້ຕາມປະເພນີ ຢູ່ສອງໝູ່ບ້ານຊົນເຜົ່າຂອງແຂວງຜົ້ງສາລີ. **ການສຶກສາຄົ້ນຄວ້າກ່ຽວກັບລະບົບການຄອບຄອງທີ່ດິນຕາມປະເພນີແມ່ນມີຄວາມຈຳເປັນຄວນໄດ້ເຮັດການສຶກສາເພີ່ມເຕີມ ເພື່ອໃຫ້ທຸກພາກສ່ວນມີຄວາມເຂົ້າໃຈຢ່າງຈະແຈ້ງ** ເພື່ອການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ຮັບປະກັນໃນການປັບປຸງການດຳລົງຊີວິດຂອງຊຸມຊົນເຂດຊົນນະບົດ.

- **ພາຍໃຕ້ລະບົບການຄຸ້ມຄອງທີ່ດິນຕາມປະເພນີ, ຄອບຄົວແມ່ນ ຫົວໜ່ວຍຄຸ້ມຄອງທີ່ດິນກະສິກຳ ແລະ ດິນເຮືອນ, ແຕ່ການສືບທອດຊັບສິນນີ້ແມ່ນສຳລັບເພດຊາຍເທົ່ານັ້ນ.** ເພດຍິງບໍ່ສາມາດເປັນເຈົ້າຂອງທີ່ດິນຢ່າງເປັນເອກະລາດແຍກອອກຈາກເພດຊາຍ.

- ໃນສອງບ້ານທີ່ໄດ້ໄປສຶກສາ, ທັງ**ເພດຊາຍ ແລະ ເພດຍິງລ້ວນແຕ່ມີສິດໃນການເຂົ້າເຖິງປ່າໄມ້ຕາມປະເພນີທີ່ເທົ່າທຽມກັນ**, ຊຶ່ງເປັນການສືບທອດມໍຣະດົກຮ່ວມລະຫວ່າງປະຊາຊົນພາຍໃນບ້ານ ແຕ່ທີ່ດິນກະສິກຳ (ເຊັ່ນ: ທົ່ງນາ ແລະ ສວນ) ຫຼື ເຮືອນ ບໍ່ແມ່ນການສືບທອດຮ່ວມ.

- **ແມ່ຍິງ ແລະ ຜູ້ຊາຍມີສິດເທົ່າທຽມກັນ ໃນການຂຸດຄົ້ນເຄື່ອງປ່າຂອງດົງ.** ແຕ່ອີງໃສ່ການແບ່ງບົດບາດ ແລະ ໜ້າທີ່ຕາມເພດແບບດັ້ງເດີມ ຊຶ່ງເປັນການສ້າງຄວາມບໍ່ສະເໝີພາບບາງຢ່າງໃນການນຳໃຊ້ຊັບພະຍາກອນໃນປ່າໄມ້. ຜົນທີ່ຕາມມາກໍ່ຄື ແມ່ຍິງຍັງເຮັດວຽກຫຼາຍຊົ່ວໂມງ ແລະ ເດີນທາງດ້ວຍການຍ່າງໃນໄລຍະທາງທີ່ຍາວໄກ.

- **ລະບົບການຄຸ້ມຄອງປ່າໄມ້ຕາມປະເພນີ ໃຫ້ອຳນາດຜູ້ຊາຍໃນການສ້າງກົດລະບຽບ** ແລະ ການຕັດສິນໃຈ, ເຊິ່ງມີຄວາມຄາດຫວັງໃຫ້ແມ່ຍິງປະຕິບັດຕາມ. **ລະບົບການວາງແຜນຄຸ້ມຄອງປ່າໄມ້ ທີ່ເປັນທາງການຂອງລັດໃນປະຈຸບັນ ຍັງໄດ້ເອົາເພດຍິງມາມີສ່ວນຮ່ວມ ແຕ່ຍັງບໍ່ທັນເຂົ້າຮ່ວມໃນຂະບວນການຕັດສິນໃຈເທື່ອ.**

- **ຊາວບ້ານຈະມີຄວາມເປັນເຈົ້າການ ແລະ ເຮັດວຽກໜັກຂຶ້ນເພື່ອປົກປ້ອງທີ່ດິນປ່າໄມ້ ແລະ ຊັບພະຍາກອນ ຖ້າລະບົບການຄຸ້ມຄອງໃນປັດຈຸບັນໄດ້ມອບສິດຄວາມເປັນເຈົ້າຂອງໃຫ້ເຂົາເຈົ້າຫຼາຍຂຶ້ນ.**

- **ຊັບພະຍາກອນໃນປ່າໄມ້ຫຼຸດລົງ** ຍ້ອນການຂະຫຍາຍຕົວຂອງປະຊາກອນ ແລະ ການຂຸດຄົ້ນເກີນຂອບເຂດ. **ການເສີມສ້າງຄວາມເຂັ້ມແຂງໃຫ້ແມ່ຍິງມີບົດບາດໃນຂະບວນການຕັດສິນໃຈ ຈະຊ່ວຍແບ່ງເບົາພາລະເຂົາເຈົ້າ ໃນຂະນະທີ່ ເປັນການປັບປຸງການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປ່າໄມ້ໄປພ້ອມກັນ.**

# 1. ຄວາມເປັນມາ

**ທີ່ດິນ, ປ່າໄມ້ ແລະ ນ້ຳ ແມ່ນຊັບພະຍາກອນທຳມະຊາດອັນລ້ຳຄ່າທີ່ສຸດ ສຳລັບປະຊາຊົນບັນດາຊົນເຜົ່າ** ຂອງ ສປປ ລາວ ທີ່ອາໄສຢູ່ເຂດປ່າໄມ້ໃນພື້ນທີ່ພູດອຍ. **ການຄ້ຳປະກັນ ແລະ ການສາມາດເຂົ້າເຖິງຊັບພະຍາກອນເຫຼົ່ານີ້ຢ່າງຕໍ່ເນື່ອງ ແມ່ນປັດໄຈສຳຄັນໃນການດຳລົງຊີວິດ ແລະ ຄວາມໝັ້ນຄົງທາງດ້ານສະບຽງອາຫານ.** ຫລາຍຮຸ່ນຄົນຜ່ານມາ, ແມ່ຍິງ ແລະ ຜູ້ຊາຍ ເຂົ້າເຖິງຊັບພະຍາກອນເຫຼົ່ານີ້ດ້ວຍການຄຸ້ມຄອງຕາມລະບົບປະເພນີຂອງບ້ານ.

ລັດຖະບານແຫ່ງ ສປປ ລາວ ຄາດວ່າຈະໃຫ້ບັນລຸ 70% ການປົກຫຸ້ມຂອງເນື້ອທີ່ປ່າໄມ້ໃນທົ່ວປະເທດ ໃນປີ 2020. ຄາດຄະເນຫຼ້າສຸດຂອງການປົກຫຸ້ມຂອງປ່າໃນປະຈຸບັນແມ່ນປະມານ 60%.[1] **ກຸນແຈທີ່ສຳຄັນຕໍ່ຄວາມຍືນຍົງຂອງປ່າໄມ້ຄືຄວາມເຂົ້າໃຈຄຸນຄ່າ ແລະ ຄວາມເຊື່ອຂອງຊຸມຊົນ ແລະ ມັນມີຄວາມກ່ຽວຂ້ອງກັບການຄຸ້ມຄອງທີ່ດິນ, ປ່າໄມ້ ແລະ ນ້ຳ ຄືແນວໃດ.** ເຊັ່ນ ດຽວກັນ ໂຄງການຈະຊ່ວຍພັດທະນາຊີວິດການເປັນຢູ່ ແລະ ການຢູ່ດີກິນດີຂອງຊຸມຊົນໃຫ້ດີຂຶ້ນ ໂດຍການສົ່ງເສີມສິດທີ່ດິນຂອງແມ່ຍິງ, ຄວາມສະເໝີພາບທາງເພດ ແລະ ການປ່ຽນແປງໃນທາງທີ່ດີ.

ການຄົ້ນຄວ້າກ່ຽວກັບສິດຕາມປະເພນີຂອງແມ່ຍິງກ່ຽວກັບທີ່ດິນປ່າໄມ້ ແລະ ຊັບພະຍາກອນຍັງບໍ່ທັນມີຫຼາຍ. ບົດສັງລວມຫຍໍ້ສະບັບນີ້ແມ່ນອີງໃສ່ກໍລະນີສຶກສາ (ຮູບທີ 1) ທີ່ສຶກສາກ່ຽວກັບສິດໃນການເຂົ້າເຖິງທີ່ດິນ ແລະ ປ່າໄມ້ຕາມປະເພນີຂອງ ແມ່ຍິງ ໃນບ້ານ ເຜົ່າ ກຶມມຸ-ອູ ແລະ ບ້ານ ເຜົ່າ ໄຕຂາວ ຢູ່ເມືອງໃໝ່ ແຂວງ ຜົ້ງສາລີ.



ແມ່ຍິງເຜົ່າ ກຶມມຸ ສົນທະນາການແບ່ງວຽກຕາມເພດ ຢູ່ບ້ານ ຫາດຈາ © ນາງ ພິເຄ ເພັດສາຄອນ

# ກໍລະນີສຶກສາ

ພື້ນທີ່ເກັບກໍາຂໍ້ມູນ: ບ້ານ ຫາດຈາ ແລະ ບ້ານ ຟິນຊໍ ເມືອງໃໝ່ ແຂວງ ຜົ້ງສາລີ ໃນ ເດືອນ ມັງກອນ-ກຸມພາ 2021.
ວິທີການ: ທົບທວນເອກະສານທີ່ກ່ຽວຂ້ອງ ແລະ ເກັບກໍາຂໍ້ມູນຈາກຊຸມຊົນ ໂດຍໃຊ້ວິທີການປະເມີນຊົນນະບົດແບບມີສ່ວນຮ່ວມ ແລະ ມຸມມອງສະຕິນິຍົມ. ສົນທະນາກັບກຸ່ມແມ່ຍິງ ແລະ ຜູ້ຊາຍ ທີ່ມີອາຍຸ ແລະ ສະຖານະພາບທາງສັງຄົມແຕກຕ່າງກັນ. ຍ່າງສໍາຫຼວດກັບຊາວບ້ານ ແລະ ສັງເກດການປະຕິບັດກິດຈະກໍາປະຈໍາວັນ.

## ບ້ານ ຫາດຈາ

ຫາດຈາ ເປັນບ້ານຊົນເຜົ່າ ກຶມມຸ ທີ່ຜູ້ນໍາເຜົ່າ ໄດ້ນໍາພີ່ນ້ອງຂອງລາວຈາກ ເມືອງ ງອຍ ແຂວງ ຫຼວງພະບາງ ມາຜົ້ງສາລີ ເມື່ອ 100 ປີກ່ອນ. ປະຈຸບັນ ມີປະຊາກອນທັງໝົດ 155 ຄົນ, ເພດຍິງ 77 ຄົນ. ມີ 31 ຫຼັງຄາເຮືອນ, 35 ຄອບຄົວ.

## ບ້ານ ຟິນຊໍ

ຟິນຫໍ ແມ່ນບ້ານ ຊົນເຜົ່າໄຕຂາວ ໄດ້ເຄື່ອນຍ້າຍມາຈາກແຂວງ ລາຍຈິວ ປະເທດ ຫວຽດນາມ ເມື່ອຫຼາຍທົດສະວັດຜ່ານມາ. ປະຈຸບັນມີປະຊາກອນ 185 ຄົນ, ເພດຍິງ 98 ຄົນ. ມີ 28 ຫຼັງຄາເຮືອນ, 41 ຄອບຄົວ.

## ເນື້ອທີ່ດິນ

ບ້ານປະກອບມີ 2,600 ເຮັກຕາ, ໃນນັ້ນ 76% ແມ່ນທີ່ດິນກະສິກໍາ ແລະ ເນື້ອທີ່ປ່າໄມ້ 21%. ທີ່ດິນປ່າໄມ້ແບ່ງອອກເປັນປ່າຜະລິດ, ປ່າສະຫງວນ ແລະ ປ່າປ້ອງກັນ.

## ເນື້ອທີ່ດິນ

ເນື້ອທີ່ດິນຂອງບ້ານມີ 10,000 ເຮັກຕາ. ການດໍາລົງຊີວິດຕົ້ນຕໍແມ່ນເຮັດນາ, ລ້ຽງສັດປີກ ແລະ ງົວ-ຄວາຍ, ເກັບເຄື່ອງປ່າຂອງດົງເພື່ອບໍລິໂພກ ແລະ ຂາຍ.

## ວັດທະນະທໍາ ແລະ ຮະນີບທໍານຽມ

ຊາວບ້ານປະຕິບັດຮະນີບທໍານຽມເຊື່ອເລື່ອງຜີທີ່ໄດ້ຮັບອິດທິພົນຈາກສາດສະໜາພຸດ. ເຜົ່າ ກຶມມຸ ຕັ້ງຊື່ຕະກຸນຂອງຕົນຕາມສັດ ແລະ ພືດ ແລະ ມີນິທານຕົ້ນກໍາເນີດອັນລະອຽດທີ່ເຊື່ອມຕໍ່ກັບສັດ ຫຼື ພືດພັນສະເພາະກັບຄວາມຕາຍ. ສະມາຊິກໃນຕະກຸນແມ່ນຫ້າມບໍ່ໃຫ້ກິນສັດ ຫຼື ພືດຊະນິດຕະກຸນຂອງຕົນ.

## ວັດທະນະທໍາ ແລະ ຮະນີບທໍານຽມ

ຊາວບ້ານມີປະເພນີທີ່ຕິດພັນຢ່າງສະໜິດແໜ້ນກັບປ່າໄມ້. ເຊັ່ນ: ຫຼັງຈາກເກີດລູກ ຊາວບ້ານເອົາສາຍແຮ່ ໃສ່ໃນບັ້ງໄມ້ໄຜ່, ມັດໃສ່ຕົ້ນໄມ້ທີ່ແຂງແຮງທີ່ເລືອກໄວ້ເປັນພິເສດ. ການປະຕິບັດນີ້ເຊື່ອວ່າເປັນການແຈ້ງວິນຍານສັກສິດ ເພື່ອໃຫ້ພອນ ແລະ ປົກປ້ອງເດັກເກີດໃໝ່.

## ການແຕ່ງງານ

ເດັກຊາຍແຕ່ງງານລະຫວ່າງອາຍຸ 16–18, ຫຼື 19–21 ຖ້າພວກເຂົາຮຽນຕໍ່. ເດັກຍິງສ່ວນໃຫຍ່ບໍ່ໄດ້ເຂົ້າໂຮງຮຽນມັດທະຍົມ. ປົກກະຕິແລ້ວເຈົ້າສາວຈະຍ້າຍໄປຢູ່ກັບຄອບຄົວຂອງຜົວ ແຕ່ບາງຄູ່ກໍ່ສ້າງເຮືອນຂອງຕົນເອງໃນ "ທີ່ດິນແຮຂອງບ້ານ". ທັງສອງກໍລະນີ ຄູ່ຜົວເມຍຈະເຮັດການຜະລິດຢູ່ດິນຂອງຄອບຄົວຜົວ.

## ການແຕ່ງງານ

ອາຍຸສະເລ່ຍສໍາລັບການແຕ່ງງານແມ່ນລະຫວ່າງ 16–18 ສໍາລັບເດັກຍິງ ແລະ 19–21 ສໍາລັບເດັກຊາຍ. ເຈົ້າສາວຍ້າຍໄປຢູ່ກັບຄອບຄົວຂອງເຈົ້າບ່າວ. ເມຍເຮັດວຽກທີ່ຖືວ່າເປັນ "ວຽກເບົາ", ເຊັ່ນ: ການລ້ຽງລູກ ແລະ ວຽກ ເຮືອນ, ໃນຂະນະທີ່ຜູ້ຊາຍເຮັດວຽກ "ໜັກ" ເຊັ່ນ: ການຕັດຕົ້ນໄມ້ ແລະ ການພົວພັນກັບວຽກນອກເຮືອນ.

## ລະບົບສັງຄົມ

ການປະຕິບັດສັງຄົມຕາມປະເພນີແມ່ນອີງໃສ່ກຸ່ມການສືບສາຍຍາດທາງຜູ້ຊາຍ. ການສືບທອດມູນແມ່ນຜ່ານພໍ່ສູ່ລູກຊາຍ. ຄ່າສິນສອດທີ່ຄອບຄົວຂອງເຈົ້າສາວຈ່າຍແມ່ນຂໍ້ຍົກເວັ້ນ. ສະນັ້ນ, ຖ້າເກີດການຢ່າຮ້າງ ຄ່າສິນສອດນີ້ຈະຖືກສົ່ງຄືນໃຫ້ຄອບຄົວເຈົ້າສາວ.

## ລະບົບສັງຄົມ

ການປະຕິບັດທາງສັງຄົມແມ່ນຜູ້ຊາຍ ເປັນສູນກາງ ແລະ ມີບົດບາດໃນບ້ານ ບໍ່ວ່າຈະເປັນຜູ້ບໍລິຫານ, ຜູ້ນໍາພາ ໃນການເຮັດພິທີກໍາທາງສາດສະໜາ ແລະ ອື່ນໆ ແລະ ກໍານົດໂດຍເຊື້ອສາຍ. ທີ່ດິນ, ຊັບສິນ ແລະ ການສືບທອດການເປັນຜູ້ນໍາ ແມ່ນຜ່ານທາງຜູ້ຊາຍ.



ບ້ານ ເຜົ່າ ກຶມມຸ ແລະ ເຜົ່າ ມົ້ງ, ເມືອງໃໝ່ ແຂວງ ຜົ້ງສາລີ © ນາງ ພິເຄ ເພັດສາຄອນ

## 2. ແມ່ຍິງ ແລະ ກົດໝາຍທີ່ດິນ

ຕາມທັດສະນະທາງດ້ານກົດໝາຍ, **ກົດໝາຍ ແລະ ນະໂຍບາຍມີທ່າອ່ຽງເພື່ອປົກປ້ອງສິດໃນການເຂົ້າເຖິງທີ່ດິນຂອງແມ່ຍິງ. ສິ່ງເຫຼົ່ານີ້ສ່ວນຫຼາຍແມ່ນຖືກປະຕິບັດໃນລັກສະນະຈາກເທິງລົງລຸ່ມ, ຊຶ່ງອາດຈະ ຫຼື ບໍ່ໄດ້ພິຈາລະນາ ເອົາການປະຕິບັດຕາມປະເພນີ**, ວັດທະນະທຳ ແລະ ຄຸນຄ່າທີ່ສະແດງເຖິງບັນຫາທີ່ແທ້ຈິງຂອງແມ່ຍິງ.

ຕົວຢ່າງ ກົດໝາຍ ວ່າດ້ວຍ ທີ່ດິນສະບັບປັດຈຸບັນ (2019), ມາດຕາ 130 ລະບຸວ່າ ການຮັບຮູ້ສິດນຳໃຊ້ຕາມປະເພນີແມ່ນກຳນົດໂດຍການນຳໃຊ້ທີ່ດິນຢ່າງຕໍ່ເນື່ອງເປັນເວລາ 20 ປີ ໂດຍບໍ່ມີຂໍ້ຂັດແຍ່ງ. **ຄຳວ່າ "ການນຳໃຊ້" ແມ່ນບໍ່ໄດ້ກຳນົດຊັດເຈນ ແລະ ຄາດເດົາຄວາມຫມາຍວ່າແມ່ນທີ່ດິນທີ່ຢູ່ພາຍໃຕ້ການປູກຝັງ. ຄຳນິຍາມ ຫຼື ການຕີຄວາມໝາຍ ບໍ່ໄດ້ມີຜົນສັກສິດສຳລັບລະບົບການເຮັດໄຮ່ໝູນວຽນ ເພາະບ່ອນທີ່ "ນຳໃຊ້" ເນື້ອທີ່ດິນປູກຝັງໄດ້ປ່ອຍໃຫ້ມີການຟື້ນຟູປ່າໄມ້.** ຖ້າກົດໝາຍຖືວ່າທີ່ດິນທີ່ເຮັດໄຮ່ໝູນວຽນເປັນດິນເປົ່າຫວ່າງໃນຊ່ວງບໍ່ເຮັດໄຮ່ ປະຊາຊົນຈະສູນເສຍທີ່ດິນ ຈຳນວນຫຼາຍ ເປັນຕົ້ນແມ່ນຊົນເຜົ່າທີ່ເຮັດໄຮ່ໝູນວຽນ. ອັນທີສອງຄື **ກົດໝາຍ ວ່າດ້ວຍ ທີ່ດິນບໍ່ໄດ້ກ່າວເຖິງສິດຂອງແມ່ຍິງໃນການຮັບປະກັນສິດໃນການຄອບຄອງນຳໃຊ້ທີ່ດິນ** ແລະ ແຕກຕ່າງຈາກກົດໝາຍ ວ່າດ້ວຍ ທີ່ດິນປີ 2003, ເຊິ່ງໄດ້ກຳນົດໄວ້ສຳລັບການໃຫ້ແມ່ຍິງມີສິດຮ່ວມ. **ອັນນີ້ເຮັດໃຫ້ບັນດາແມ່ຍິງທີ່ນອນຢູ່ໃນກຸ່ມສັງຄົມປະຕິບັດລະບົບການສືບທອດມໍຣະດົກຜ່ານທາງຜູ້ຊາຍຕົກຢູ່ໃນກໍລະນີເສຍປຽບ.**

ຮີດຄອງປະເພນີ ແລະ ວັດທະນະທຳຄວນໄດ້ຮັບການພິຈາລະນາໃນການປະຕິບັດກົດໝາຍ. ນິຕິກຳລຸ່ມກົດໝາຍສາມາດນຳໃຊ້ເພື່ອຊີ້ແຈງບັນຫາຂ້າງເທິງ. ສິ່ງດັ່ງກ່າວຈະເປັນການເສີມຂະຫຍາຍການພັດທະນາເສດຖະກິດສັງຄົມໃນຫຼາຍພາກສ່ວນຂອງປະເທດ.

> "ຖ້າກົດໝາຍຖືວ່າທີ່ດິນທີ່ເຮັດໄຮ່ໝູນວຽນເປັນດິນເປົ່າຫວ່າງໃນຊ່ວງບໍ່ເຮັດໄຮ່ ປະຊາຊົນຈະສູນເສຍທີ່ດິນ ຈຳນວນຫຼາຍ ເປັນຕົ້ນແມ່ນຊົນເຜົ່າທີ່ເຮັດໄຮ່ໝູນວຽນ."

> "ນິຕິກຳລຸ່ມກົດໝາຍສາມາດນຳໃຊ້ເພື່ອຊີ້ແຈງບັນຫາຂ້າງເທິງ. ສິ່ງດັ່ງກ່າວຈະເປັນການເສີມຂະຫຍາຍການພັດທະນາເສດຖະກິດສັງຄົມໃນຫຼາຍພາກສ່ວນຂອງປະເທດ."

# 3. ສິດກ່ຽວກັບທີ່ດິນຕາມປະເພນີ

**ສິດກ່ຽວກັບທີ່ດິນທີ່ບໍ່ເປັນທາງການ ຫຼື ສິດກ່ຽວກັບທີ່ດິນຕາມປະເພນີ ແມ່ນຮູບແບບຂອງການພົວພັນກັນຫຼາກຫຼາຍຊ່ອງທາງທີ່ສ້າງຂຶ້ນຢູ່ນອກຂອບເຂດຂອງກົດໝາຍ.** ເປັນຊຸດຂອງກົດລະບຽບ ແລະ ຫຼັກການຂອງຊຸມຊົນທີ່ສືບທອດມາຈາກລຸ້ນປູ່ຍ່າຕາຍາຍ ແລະ ໄດ້ຮັບການຍອມຮັບ, ຕີຄວາມໝາຍຄືນໃຫມ່ ແລະ ບັງຄັບໃຊ້ໂດຍຊຸມຊົນ.

ຜູ້ຊາຍ ແລະ ແມ່ຍິງທີ່ສົນທະນາໃນກຸ່ມ ຢູ່ບ້ານ ຫາດຈາ ແລະ ບ້ານ ຝົນຮໍ ໄດ້ໃຫ້ຄວາມເຫັນດຽວກັນວ່າ: "ສິດກ່ຽວກັບທີ່ດິນຕາມປະເພນີ ແມ່ນສິດສືບທອດທີ່ດິນຈາກແມ່ ແລະ ພໍ່ຂອງພວກເຮົາ, ພວກເຮົາມີສິດກັບທີ່ດິນນີ້ ຊຶ່ງຄົນອື່ນບໍ່ສາມາດມາເອົາໄດ້ ແລະ ໄວ້ໃຫ້ສໍາລັບລູກໆ ຂອງພວກເຮົາ." ລູກໃນທີ່ນີ້ຫມາຍເຖິງລູກຊາຍ ແລະ ແມ່ຫມາຍເຖິງການມີສິດຮ່ວມ ກັບພໍ່.

**ສິດຄອບຄອງທີ່ດິນບຸກຄົນຂອງແມ່ຍິງ ເປັນສິດທີ່ແຍກອອກໄປ** ແລະ ບໍ່ຊັດເຈນ. ວັດທະນະທໍາໃຫ້ລັກສະນະ **ສິດກ່ຽວກັບທີ່ດິນຂອງແມ່ຍິງສໍາພັນກັບຜູ້ຊາຍ (ເຊັ່ນ: ສາມີ, ພໍ່, ອ້າຍ) ແລະ ຂຶ້ນກັບຖານະທາງສັງຄົມຂອງເຂົາ ເຈົ້າ (ເຊັ່ນ: ໂສດ, ແຕ່ງງານ, ແມ່ຫມ້າຍ) ຊຶ່ງຂ້າງລຸ່ມ ສະແດງໃຫ້ເຫັນຄວາມສະລັບສັບຊ້ອນຂອງປັດໄຈຕ່າງ ໆ ທີ່ສົ່ງຜົນກະທົບຕໍ່ສິດກ່ຽວກັບທີ່ດິນຂອງແມ່ຍິງ ແລະ ມີແນວໂນ້ມຂຶ້ນກັບຜູ້ຊາຍ ໃນການປະຕິບັດກິດຈະກໍາ ການດໍາລົງຊີວິດຂອງເຂົາເຈົ້າ.**

ຮູບແຜນວາດ 2 ສະແດງໃຫ້ເຫັນທີ່ດິນ 4 ປະເພດ. ສີແຕ່ລະພື້ນທີ່ສະແດງເຖິງປະເພດຂອງການສືບທອດມໍຣະດົກທີ່ປະຕິບັດໃນບ້ານ — ການສືບທອດມໍລະດົກທີ່ເປັນທີ່ດິນຂອງຊຸມຊົນ ຫຼື ທີ່ດິນບຸກຄົນ/ຍາດພີ່ນ້ອງ.

> "“ສິດກ່ຽວກັບທີ່ດິນຕາມປະເພນີ ແມ່ນສິດສືບທອດທີ່ດິນຈາກແມ່ ແລະ ພໍ່ຂອງພວກເຮົາ, ພວກເຮົາມີສິດກັບທີ່ດິນນີ້ ຊຶ່ງຄົນອື່ນບໍ່ສາມາດມາເອົາໄດ້ ແລະ ໄວ້ໃຫ້ສໍາລັບລູກໆ ຂອງພວກເຮົາ.' ລູກໃນທີ່ນີ້ຫມາຍເຖິງລູກຊາຍ ແລະ ແມ່ຫມາຍເຖິງການມີສິດ ຮ່ວມກັບພໍ່.”

ຮູບແຜນວາດ 2






ຫຍ້າແຂມຕາກແຫ້ງຫຼັງຈາກທີ່ຊາວບ້ານຂາຍໃຫ້ຜູ້ຊື້ © ນາງ ພິເຄ ເພັດສາຄອນ

## 4. ສິດໃນການເຂົ້າເຖິງປ່າໄມ້

**ທັງຍິງ ແລະ ຊາຍມີສິດເທົ່າທຽມກັນໃນການຂຸດຄົ້ນຊັບພະຍາກອນຈາກປ່າໄມ້.** ແມ່ຍິງສ່ວນຫຼາຍເກັບອາຫານຈາກປ່າເພື່ອບໍລິໂພກປະຈຳວັນ, ຊຶ່ງເປັນກິດຈະກຳທີ່ສຳຄັນທີ່ສະແດງໃຫ້ເຫັນເຖິງສະຖານະພາບຂອງເຂົາເຈົ້າໃນການເປັນ "ແມ່ຍິງທີ່ດີ" ແລະ ສະມາຊິກຂອງຊຸມຊົນ. ແມ່ຍິງຍັງເຂົ້າປ່າເລິກເພື່ອຫາເຄື່ອງປ່າຂອງດົງໄປຂາຍ. ສຳລັບຜູ້ຊາຍແມ່ນລ່າສັດປ່າ ແລະ ສ່ວນໃຫຍ່ແມ່ນເພື່ອບໍລິໂພກປະຈຳວັນ.

ການຂຸດຄົ້ນຊັບພະຍາກອນປ່າໄມ້ຂຶ້ນກັບຄວາມສາມາດຂອງແຕ່ລະບຸກຄົນ. ໃນຂະນະທີ່ການເຂົ້າເຖິງປ່າໄມ້ແມ່ນຄືກັນລະຫວ່າງຜູ້ຊາຍ ແລະ ແມ່ຍິງ. ຄວາມບໍ່ສະເຫມີພາບບາງຢ່າງຍັງມີໃນຊຸມຊົນຍ້ອນການແບ່ງບົດບາດຍິງ-ຊາຍແບບດັ້ງເດີມ. **ແມ່ຍິງເຮັດວຽກຫຼາຍຊົ່ວໂມງກວ່າຜູ້ຊາຍ ແລະ ເດີນທາງດ້ອຍການຍ່າງເປັນໄລຍະທາງທີ່ຍາວໃນການໄປເອົາເຄື່ອງປ່າຂອງດົງ, ໃນຂະນະທີ່ຜູ້ຊາຍໃຊ້ລົດຈັກເພື່ອຂົນສົ່ງເຄື່ອງປ່າຂອງດົງ**.

**ນອກຈາກນັ້ນ, ຊັບພະຍາກອນປ່າໄມ້ຍັງຫຼຸດລົງຍ້ອນການເພີ່ມຂອງປະຊາກອນ ແລະ ການຂຸດຄົ້ນໃນຮູບແບບບໍ່ຍືນຍົງ.** ນີ້ຄືຄວາມກັງວົນຂອງຊາວບ້ານ ເພາະເຄື່ອງປ່າຂອງດົງເປັນສິ່ງສຳຄັນໃນການດຳລົງຊີວິດຂອງເຂົາເຈົ້າ. ແມ່ຍິງ ເຜົ່າ ກຶມມຸ ທ່ານໜຶ່ງ ຈາກບ້ານ ຫາດຈາ ກ່າວວ່າ: "ການຂາຍຫຍ້າແຂມ ແລະ ເຄື່ອງປ່າຂອງດົງເປັນການສ້າງລາຍໄດ້ເພີ່ມເຕີມໃຫ້ແກ່ຄອບຄົວຂອງພວກເຮົາ...ຂ້ອຍບໍ່ມີແຫຼ່ງລາຍຮັບອື່ນເລີຍ... ຖ້າພວກເຮົາບໍ່ມີປ່າກໍ່ບໍ່ມີອາຫານ."

**ການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ດີຂຶ້ນໂດຍອີງໃສ່ການປັບປຸງການມີສ່ວນຮ່ວມຂອງແມ່ຍິງໃນການຕັດສິນໃຈ ຈະຊ່ວຍແບ່ງເບົາພາລະເຂົາເຈົ້າ ໃນຂະນະທີ່ເປັນການປັບປຸງການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປ່າໄມ້ໄປພ້ອມກັນ.**

## 5. ສິດໃນການຂຸດຄົ້ນ ແລະ ຜົນປະໂຫຍດຕໍ່ຊຸມຊົນ

**ການເຂົ້າເຖິງ ແລະ ນໍາໃຊ້ທີ່ດິນລວມໝູ່ແມ່ນສິດແຕ່ກໍາເນີດທີ່ທັງຊາຍ ແລະ ຍິງມີມາຕາມປະເພນີແຕ່ດຶນນານຈົນເຖິງທຸກວັນນີ້.** ແມ່ຍິງ ຫຼື ຜູ້ຊາຍສາມາດເຂົ້າໄປໃນເຂດປ່າໄດ້ໂດຍບໍ່ມີການຈໍາກັດພື້ນທີ່, ຍົກເວັ້ນປ່າສັກສິດຢູ່ບ້ານ ຟີນຮໍ. ປ່າສັກສິດນີ້ ເປັນປ່າດົງດຽວທີ່ຍັງເຫຼືອຢູ່ໃນບ້ານຟີນຮໍ ຊຶ່ງອຸດົມ ສົມບູນໄປດ້ວຍຊີວະນາໆພັນ, ສັດປ່າ, ພືດທີ່ເປັນຢາ, ເຄື່ອງປ່າຂອງດົງ ແລະ ຕົ້ນໄມ້ໃຫຍ່. ຄວາມເຊື່ອແມ່ນວ່າຊາຍ-ຍິງບໍ່ເຂົ້າໄປໃນເຂດນີ້ເພາະອາດຈະເຮັດໃຫ້ເຂົາເຈົ້າເຈັບປ່ວຍ ແລະ ນໍາໂຊກຮ້າຍມາໃຫ້ທັງບ້ານ.

ເຜົ່າກຶມມຸມີຄວາມສໍາພັນກັບປ່າໄມ້ທີ່ສະຫຼັບຊັບຊ້ອນ. ຫຼາຍໆການປະຕິບັດແມ່ນເປັນຄວາມລັບ. ເຖິງຢ່າງໃດກໍຕາມ, ໂດຍເນື້ອແທ້ແລ້ວ, ແມ່ຍິງເຜົ່າກຶມມຸສາມາດເຂົ້າເຖິງປ່າໄມ້ໂດຍບໍ່ຈໍາກັດ ແລະ ປະກົດວ່າພວກເຂົາໃຊ້ເວລາໃນປ່າຫຼາຍກວ່າຜູ້ຊາຍ. ແມ່ຍິງເຜົ່າກຶມມຸຜູ້ໜຶ່ງເວົ້າວ່າ: "ແມ່ຍິງມີສິດໄປປ່າໄດ້ທຸກທີ່ຄືກັນກັບຜູ້ຊາຍ... ພວກເຮົາໄປປ່າທຸກວັນ ແລະ ບາງຄັ້ງແມ່ຍິງກໍ່ໄປໄກກວ່າຜູ້ຊາຍ."



ຜັກສີຂຽວທີ່ແມ່ຍິງບ້ານຟີນຮໍເກັບ © ນາງ ພິເຄ ເພັດສາຄອນ

# 6. ບົດບາດຂອງແມ່ຍິງໃນການຄຸ້ມຄອງປ່າໄມ້ຕາມປະເພນີ

**ການຄອບຄອງທີ່ດິນແມ່ນຕິດພັນກັບຍາດຕິພີ່ນ້ອງ, ການແຕ່ງດອງ ແລະ ສະຖາບັນອື່ນໆ ໃນບ້ານ. ການປະຕິບັດຕາມປະເພນີ ກຸ່ມຍາດຕິພີ້ນ້ອງແມ່ນສະຖາບັນທີ່ສຳຄັນທີ່ສຸດສຳລັບການປົກຄອງທີ່ດິນ.** ກຸ່ມຍາດຕິພີ່ນ້ອງແມ່ນໂຄງສ້າງແບບດັ້ງເດີມ, ປົກຄອງໂດຍຜູ້ນຳທີ່ເປັນຜູ້ຊາຍ, ປົກກະຕິແລ້ວຜູ້ເຖົ້າຜູ້ແກ່ມີຄວາມທີ່ສຳຄັນທີ່ສຸດໃນເຊື້ອສາຍ ຫຼື ຕະກຸນ.

**ສະຖາບັນຄອບຄົວເປັນອັນດັບສອງ.** ສະຖາບັນນີ້ມີສິດໃນກຳນົດການແຈກຢາຍທີ່ດິນ ແລະ ຊັບສິນ, ເປັນເຈົ້າຂອງ, ນຳໃຊ້ ແລະ ການແບ່ງປັນຜົນປະໂຫຍດລະຫວ່າງສະມາຊິກຄອບຄົວ, ຍາດພີ່ນ້ອງ ແລະ ຊຸມຊົນໃນບ້ານ.

**ອັນດັບທີສາມແມ່ນການປົກຄອງບ້ານແບບດັ້ງເດີມໄປຄຽງຄູ່ກັບອຳນາດການປົກຄອງບ້ານ.** ໂຄງປະກອບການປົກຄອງນີ້ແມ່ນປະສົມປະສານການປະຕິບັດແບບດັ້ງເດີມ ແລະ ນະໂຍບາຍຂອງລັດທີ່ສຸມໃສ່ການຄຸ້ມຄອງທີ່ດິນປ່າໄມ້ ແລະ ການຊັບພະຍາກອນ. ສະຖາບັນທັງໝົດເຫຼົ່ານີ້ຖືກຄຸ້ມຄອງໂດຍເຖົ້າແກ່ແນວໂຮມ ຫຼື ເຈົ້າກົກເຈົ້າເລົ່າ ແລະ ອີງໃສ່ຮີດຄອງປະເພນີໃນການຮັກສາການປະຕິບັດຕາມຄວາມເຊື່ອທີ່ເປັນທີ່ຍອມຮັບຂອງສະມາຊິກທັງໝົດໃນຊຸມຊົນ.

**ບັນດາຜູ້ເຖົ້າຜູ້ແກ່ຂອງບ້ານ ແລະ ອຳນາດການປົກຄອງບ້ານເປັນຜູ້ສ້າງລະບຽບ.** ເຂົາເຈົ້າແຈ້ງໃຫ້ຊາວບ້ານ, ຕິດຕາມກວດກາການປະຕິບັດຂອງປະຊາຊົນ ແລະ ລົງໂທດຜູ້ກະທຳຜິດຕໍ່ລະບຽບ. ແມ່ຍິງບໍ່ໄດ້ຖືກລວມເຂົ້າໃນການສ້າງລະບຽບການປົກຄອງ, ແຕ່ປົກກະຕິແລ້ວເຂົ້າຮ່ວມພຽງແຕ່ໃນຂັ້ນຕອນສຸດທ້າຍໃນເວລາທີ່ຜູ້ນຳແຈ້ງໃຫ້ຊາວບ້ານຮູ້ກ່ຽວກັບກົດ ລະບຽບ.

**ທັງບ້ານ ຫາດຈາ ແລະ ຟີນຮໍ ບໍ່ມີຜູ້ນຳທີ່ເປັນເພດຍິງ; ດັ່ງນັ້ນ, ພວກເຂົາຍັງຢູ່ນອກໂຄງສ້າງການປົກຄອງ.** ຜູ້ຊາຍທ່ານຫນຶ່ງ ຢູ່ ບ້ານ ຟີນຮໍ ໃຫ້ທັດສະນະກ່ຽວກັບການມີສ່ວນຮ່ວມຂອງແມ່ຍິງໃນການຕັດສິນໃຈ ແລະ ການສ້າງກົດລະບຽບໃນການນຳໃຊ້ຊັບພະຍາກອນປ່າໄມ້ວ່າ: "... ແມ່ຍິງບໍ່ໄດ້ເປັນສ່ວນໜຶ່ງຂອງການສ້າງກົດລະບຽບ ເພາະບໍ່ແມ່ນໜ້າທີ່ຂອງເຂົາເຈົ້າ, ເຂົາເຈົ້າອ່ານ ແລະ ຂຽນບໍ່ໄດ້... ເຂົາເຈົ້າບໍ່ຮູ້ວິທີເຮັດວຽກທາງລັດຖະການ ແລະ ວຽກການຄຸ້ມຄອງ, ເຖິງແມ່ນວ່າເຂົາເຈົ້າຈະເຂົ້າໄປໃນປ່າ ແລະ ນຳໃຊ້ຊັບ ພະຍາກອນປ່າໄມ້ຄືກັບຜູ້ຊາຍ."

> **"ແມ່ຍິງໄອກາງສອງ-ສາມ ຄົນ ຢູ່ ບ້ານ ຫາດຈາ ກ່າວວ່າ ເຂົາເຈົ້າສາມາດເຮັດວຽກການຄຸ້ມຄອງປ່າໄມ້ໄດ້ຄືກັນກັບຜູ້ຊາຍ ຖ້າຫາກວ່າຜົວຂອງເຂົາເຈົ້າສະຫນັບສະຫນູນ, ເຮັດວຽກເຮືອນ ແລະ ດູແລເດັກນ້ອຍ."**

> **"... ແມ່ຍິງບໍ່ໄດ້ເປັນສ່ວນໜຶ່ງຂອງການສ້າງກົດລະບຽບ ເພາະບໍ່ແມ່ນໜ້າທີ່ຂອງເຂົາເຈົ້າ, ເຂົາເຈົ້າອ່ານ ແລະ ຂຽນບໍ່ໄດ້... ເຂົາເຈົ້າບໍ່ຮູ້ວິທີເຮັດວຽກທາງລັດຖະການ ແລະ ວຽກການຄຸ້ມຄອງ, ເຖິງແມ່ນວ່າເຂົາເຈົ້າຈະເຂົ້າໄປໃນປ່າ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ຄືກັບຜູ້ຊາຍ."**
>
> ຜູ້ຊາຍ ເຜົ່າ ໄຕຂາວ ຈາກ ບ້ານ ຟີນຮໍ

ສ່ວນຫຼາຍແລ້ວ ແມ່ຍິງມີການສຶກສາ ແລະ ປະສົບການໃນການເຮັດວຽກທາງລັດຖະການໜ້ອຍ, ເຊິ່ງເຮັດໃຫ້ເຂົາເຈົ້າຮູ້ສຶກບໍ່ໝັ້ນໃຈໃນການມີສ່ວນຮ່ວມໃນການຄຸ້ມຄອງປ່າໄມ້ ຫຼື ການຕັດ ສິນໃຈກ່ຽວກັບການນຳໃຊ້ປ່າໄມ້. ເຖິງຢ່າງໃດ ກໍຕາມ, ແມ່ຍິງໄອກາງສອງ-ສາມ ຄົນ ຢູ່ ບ້ານ ຫາດຈາ ກ່າວວ່າ ເຂົາເຈົ້າສາມາດເຮັດວຽກການ ຄຸ້ມຄອງປ່າໄມ້ໄດ້ຄືກັນກັບຜູ້ຊາຍ ຖ້າຫາກວ່າຜົວຂອງເຂົາເຈົ້າສະຫນັບສະຫນູນ, ເຮັດວຽກເຮືອນ ແລະ ດູແລເດັກນ້ອຍ. ແມ່ຍິງ ບ້ານ ຟີນຮໍ ຍັງມີຄວາມລັງເລທີ່ຈະເຂົ້າ ຮ່ວມໃນວຽກ ງານການຄຸ້ມຄອງປ່າໄມ້.[2]



ຊາວບ້ານ ຈາກບ້ານຫາດຈາ © ນາງ ພິເດ ເພັດສາຄອນ

## 7. ການມີສ່ວນຮ່ວມຂອງແມ່ຍິງໃນການຄຸ້ມຄອງປ່າໄມ້ທີ່ເປັນທາງການ

ໃນຊ່ວງຜ່ານມາ, ລະບົບການຄຸ້ມຄອງປ່າໄມ້ໃນລາວມີການປ່ຽນແປງ ລວມທັງຜູ້ສ້າງກົດລະບຽບໃໝ່. ໃນປັດຈຸບັນ ສະຖາບັນການປົກຄອງແມ່ນປະກອບດ້ວຍອົງກອນຫຼັກຂອງລັດ ແລະ ຫ້ອງການທີ່ກ່ຽວຂ້ອງ, ລວມທັງການນຳຂອງບ້ານ. **ຜູ້ອອກກົດລະບຽບແມ່ນພະນັກງານລັດ ດ້ວຍການເຮັດວຽກຢ່າງໃກ້ຊິດກັບອຳນາດການປົກຄອງບ້ານ ແຕ່ທັງຫມົດແມ່ນຜູ້ຊາຍ.**

ບ້ານ ຫາດຈາ ໄດ້ສຳເລັດການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ໃນປີ 2017 ນຳພາໃນການຈັດຕັ້ງ ປະຕິບັດໂດຍ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (DAFO) ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ (DoNRE) ຊຶ່ງໄດ້ຮັບການສະໜັບສະໜູນດ້ານການເງິນຈາກ ອົງການ ທ່ວງໄຍຮ່ວມໃຈພັດທະນາ (World Renew). ປະຈຸບັນ ປ່າໄມ້ຖືກແບ່ງອອກເປັນ 3 ຊະນິດຄື: 1) ປ່າຜະລິດ, 2) ປ່າສະຫງວນ ແລະ 3) ປ່າປ້ອງກັນ. ປະເພດປ່າເຫຼົ່ານີ້ລ້ວນແຕ່ມີນະໂຍບາຍສະເພາະ ທີ່ສ້າງໂດຍທີມງານ PLUP ຂັ້ນເມືອງ ດ້ວຍການປຶກສາຫາລືກັບຊາວບ້ານ.

ການປ່ຽນແປງເຫຼົ່ານີ້ທັງຜູ້ຊາຍ ແລະ ແມ່ຍິງໃນບ້ານຮັບຮູ້ດີ. ທັງສອງກຸ່ມໄດ້ລາຍງານວ່າ ປ່າໄມ້ ແລະ ຊັບພະຍາກອນທີ່ໃຊ້ມາແຕ່ດົນນານແມ່ນຂອງເຂົາເຈົ້າ ແລະ ເຂົາເຈົ້າເຄີຍມີສິດເຕັມທີ່ໃນການຄຸ້ມຄອງ ແລະ ຄວບຄຸມ. ທີ່ດິນ ແລະ ແຫຼ່ງຊັບພະຍາກອນເຫຼົ່ານີ້ຍັງເປັນຂອງຊາວບ້ານ ແຕ່ປະຈຸບັນຢູ່ພາຍໃຕ້ການຄວບຄຸມຂອງລັດ ຫຼື ຢູ່ໃນພາສາລາວທີ່ວ່າ ລັດຄຸ້ມຄອງປະຊາຊົນເປັນເຈົ້າ.

ສິ່ງນີ້ໝາຍຄວາມວ່າ ຊາວບ້ານມີສິດໃນການເຂົ້າເຖິງ ແລະ ນຳໃຊ້ ແລະ ມີຄວາມຮັບຜິດຊອບໃນການປົກປ້ອງປ່າໄມ້, ແຕ່ສິດໃນການອະນຸມັດໃຫ້ເຊົ່າ ຫຼື ໂອນພື້ນທີ່ເຫຼົ່ານີ້ໄປເປັນການນຳໃຊ້ທີ່ດິນແບບອື່ນ ຫຼື ຈັດເປັນປະເພດປ່າ ແມ່ນ ລັດເປັນຜູ້ຄວບຄຸມ.



ຊາວບ້ານ ຟິນຮໍ ກໍາລັງເຂົ້າປ່າເພື່ອຫາອາຫານ © ນາງ ພິເຄ ເພັດສາຄອນ

ໃນລະຫວ່າງຂະບວນການ PLUP, ທີມງານວິຊາການໄດ້ປຶກສາຫາລືກັບແມ່ຍິງ ດ້ວຍການແຍກກັນກຸ່ມ ເພື່ອເກັບກໍາຂໍ້ມູນກ່ຽວກັບການນໍາໃຊ້ຊັບພະຍາກອນປ່າໄມ້. ຢ່າງໃດກໍ່ຕາມ, **ແມ່ຍິງບໍ່ໄດ້ຖືກເຊີນເຂົ້າຮ່ວມການສົນທະນາກ່ຽວກັບກິດຈະກໍາຕັດສິນການຈັດສັນເຂດທີ່ດິນ ຫຼື ນະໂຍບາຍ. ແມ່ຍິງຖືກເອີ້ນໃຫ້ມາເຂົ້າຮ່ວມພຽງແຕ່ເວລາທີ່ທີມງານວິຊາການນໍາສະເຫນີນະໂຍບາຍ ແລະ ກົດລະບຽບທີ່ສ້າງໃຫມ່.**

ບ້ານ ຟິນຮໍ ຍັງບໍ່ທັນເຮັດກິດຈະກໍາ PLUP ຫຼື ແຜນການຄຸ້ມຄອງປ່າໄມ້ບ້ານ. ແນວໃດກໍ່ຕາມ, ຫ້ອງການ ກະສິກໍາ ແລະ ປ່າໄມ້ເມືອງ ໄດ້ສົ່ງແຈ້ງການໃຫ້ບ້ານກ່ຽວກັບແຜນການຂອງເມືອງເພື່ອເພີ່ມທະວີການປົກຫຸ້ມປ່າໄມ້ ແລະ ຊາວບ້ານຮັບຮູ້ວ່າລັດມີອໍານາດໃນການຄວບຄຸມການນໍາໃຊ້ປ່າໄມ້. ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງສົ່ງຈົດໝາຍໃຫ້ບ້ານກ່ຽວກັບແຈ້ງການນະໂຍບາຍນີ້ເມື່ອສາມປີກ່ອນ ເພື່ອໃຫ້ຊາວບ້ານຮັບຮູ້ ແລະ ຊາວບ້ານຄວນປົກປ້ອງປ່າໄມ້ຕາມເຂດທີ່ຫ້ອງການກະສິກໍາ ແລະ ປ່າໄມ້ກໍານົດໄວ້. ບໍ່ມີກົດລະບຽບ ຫຼື ນະໂຍບາຍລະອຽດໃນຈົດໝາຍແຈ້ງການ. ແມ່ຍິງສ່ວນຫຼາຍບໍ່ຮັບຮູ້ແຈ້ງການນີ້.

ເຖິງວ່າລະບົບການຄຸ້ມຄອງທີ່ເປັນທາງການໄດ້ມີປ່ຽນໄປ ແຕ່ໃນພາກປະຕິບັດ ສະມາຊິກໃນບ້ານຍັງປະຕິບັດການການນັບຖື ແລະ ນໍາໃຊ້ປ່າໄມ້ຕາມປະເພນີ ແລະ ຄວາມເຊື່ອດັ້ງເດີມ. **ລະບົບການຄຸ້ມຄອງປ່າໄມ້ໃນປັດຈຸບັນເຮັດໃຫ້ແມ່ຍິງດ້ອຍໂອ ກາດ ແລະ ໄດ້ຫຼຸດຜ່ອນຄວາມເປັນເຈົ້າການໃນການຄອບຄອງທີ່ດິນ ແລະ ຊັບພະຍາກອນປ່າໄມ້ຂອງຊາວບ້ານ. ການສູນເສຍສິດຄອບຄອງຮ່ວມ ແລະ ສິດລວມໝູ່ເຮັດໃຫ້ຄວາມກະຕຸ້ນໃຈ ແລະ ແຮງຈູງໃຈຂອງຊຸມຊົນໃນການປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ຫຼຸດລົງ.**

“ທັງຍິງ ແລະ ຊາຍ ລາຍງານວ່າທີ່ດິນປ່າໄມ້ ແລະ ຊັບພະຍາກອນເຄີຍເປັນຂອງເຂົາເຈົ້າ ... ແຕ່ໃນປັດຈຸບັນຢູ່ພາຍໃຕ້ການຄວບຄຸມຂອງລັດ ຫຼື ຕາມພາສາລາວທີ່ວ່າ ລັດຄຸ້ມຄອງປະຊາຊົນເປັນເຈົ້າ.”

“ການສູນເສຍສິດຄອບຄອງຮ່ວມ ແລະ ສິດລວມໝູ່ ເຮັດໃຫ້ຄວາມກະຕືລືລົ້ນ ແລະ ແຮງຈູງໃຈຂອງຊຸມຊົນໃນການປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ຫຼຸດລົງ.”

## 8. ຂໍ້ສະເໜີແນະນຳ

- **ການປ່ຽນແປງມາດຕະຖານທາງເພດແມ່ນມີຄວາມຈຳເປັນ ເພື່ອຮັບປະກັນຄວາມໝັ້ນຄົງໃນການເຂົ້າເຖິງ ສິດຄອບຄອງປ່າໄມ້ ແລະ ຊັບພະຍາກອນຂອງແມ່ຍິງ.** ໂດຍສະເພາະ ຜູ້ຊາຍຈຳເປັນຕ້ອງເຂົ້າໃຈ ແລະ ຮັບຮູ້ສິດຂອງແມ່ຍິງ ແລະ ສົ່ງເສີມການສ້າງຄວາມເຂັ້ມແຂງໃຫ້ກັບແມ່ຍິງ.

- **ສຶກສາຄົ້ນຄວ້າເພີ່ມເຕີມກ່ຽວກັບການປະຕິບັດຕາມຮີດຄອງປະເພນີຂອງກຸ່ມຊົນເຜົ່າ,** ໂດຍເນັ້ນໃສ່ເພື່ອສ້າງຄວາມເຂົ້າໃຈໃນການເຂົ້າເຖິງ ແລະ ການນຳໃຊ້ທີ່ດິນ ແລະ ປ່າໄມ້ຂອງແມ່ຍິງ. **ຄວາມຮູ້ທີ່ໄດ້ຈາກການສຶກສາຄວນນຳມາໃຊ້ເພື່ອແຈ້ງ ແລະ ສ້າງຄວາມເຂັ້ມແຂງດ້ານກົດໝາຍ, ນະໂຍບາຍ ແລະ ນິຕິກຳຕ່າງໆ ໃນອະນາຄົດ.**

- **ກົດໝາຍ ແລະ ນະໂຍບາຍຂອງລັດຄວນຮັບຮູ້ສິດລວມໝູ່ ແລະ ກຳນະສິດລວມໝູ່ກ່ຽວກັບທີ່ດິນ, ລວມທັງການນຳໃຊ້** ແລະ ການຂຸດຄົ້ນຊັບພະຍາກອນປ່າ ແລະ ມີການປະຕິບັດຢ່າງເຂັ້ມງວດ ພ້ອມທັງມີລະບົບການຕິດຕາມ. ກົດໝາຍວ່າດ້ວຍທີ່ດິນປະຈຸບັນເນັ້ນໜັກເຖິງການຮັບຮູ້ສິດທີ່ດິນຕາມປະເພນີ. **ນິຕິກຳລຸ່ມກົດໝາຍສາມາດນຳໃຊ້ເພື່ອຮັບປະກັນສິດຂອງຊົນເຜົ່າເຫຼົ່ານີ້, ໂດຍສະເພາະແມ່ຍິງ.**

- **ໂຄງການສົ່ງເສີມຄວາມເຂັ້ມແຂງໃຫ້ແກ່ການດຳລົງຊີວິດການເປັນຢູ່ຂອງແມ່ຍິງໃນເຂດຊົນນະບົດ** ຜ່ານການຊ່ວຍເຫຼືອທາງດ້ານເຕັກນິກການຂຸດຄົ້ນເຄື່ອງປ່າຂອງດົງ ແລະ ກິດຈະກຳການສ້າງລາຍຮັບອື່ນໆ ໂດຍສະເພາະໃນຂຸມຊົນຊົນເຜົ່າ.

- **ທີມງານວິຊາການຂອງ PLUP ຄວນຮັບປະກັນການມີສ່ວນຮ່ວມອັນມີຄວາມຫມາຍຂອງແມ່ຍິງໃນຂະບວນການຕັດສິນໃຈ ແລະ ການໃຫ້ຄວາມຮູ້ດ້ານສິດກ່ຽວກັບທີ່ດິນຂອງແມ່ຍິງ, ໂດຍການເອົາພະນັກງານຈາກ ຄະນະກຳມະທິການເພື່ອຄວາມກ້າວຫນ້າຂອງແມ່ຍິງ (CAW) ເຂົ້າຮ່ວມໃນທີມງານພະນັກງານ.** ຄວນມີການປຶກສາຫາລື ແລະ ຂໍການເຫັນດີເຫັນພ້ອມຈາກກຸ່ມແມ່ຍິງ ແລະ ຊາວບ້ານແມ່ຍິງ. ນີ້ແມ່ນເງື່ອນໄຂທີ່ຈຳເປັນສຳລັບການຮັບປະກັນສິດກ່ຽວກັບທີ່ດິນຂອງແມ່ຍິງ ແລະ ຮັບຮູ້ຄວາມເປັນເຈົ້າຂອງຕາມປະເພນີ ແລະ ການເຂົ້າເຖິງຊັບພະຍາກອນ.

- **ຍົກສູງຄວາມຮັບຮູ້ຂອງຜູ້ນຳຂັ້ນທ້ອງຖິ່ນກ່ຽວກັບຄວາມເຂົ້າໃຈສິດກ່ຽວກັບທີ່ດິນຂອງແມ່ຍິງ ແລະ ສົ່ງເສີມຊຸກຍູ້ກົນໄກການຄຸ້ມຄອງແບບປະສົມປະສານຢ່າງເປັນທາງການ ແລະ ບໍ່ເປັນທາງການ.** ລະບົບການຕິດຕາມ ທີ່ດີ ແລະ ການແລກປ່ຽນຂໍ້ມູນຄວນມີ ແລະ ປະຊາຊົນທ້ອງຖິ່ນສາມາດເຂົ້າເຖິງໄດ້, ລວມທັງແມ່ຍິງຜູ້ທີ່ບໍ່ສາມາດອ່ານ ແລະ ຂຽນບໍ່ເປັນ.

- **ສິດທິຕາມປະເພນີຂອງແມ່ຍິງກ່ຽວກັບທີ່ດິນ ແລະ ປ່າໄມ້ ຄວນຖືກນຳມາປຶກສາຫາລືທາງດ້ານນະໂຍບາຍທີ່ກ່ຽວໂດຍລັດຖະບານ ແລະ ຄູ່ຮ່ວມພັດທະນາ ເຊັ່ນ: ໜ່ວຍງານວິຊາການຂະແຫນງການຍ່ອຍທີ່ດິນ. ການຮ່ວມມືກັບຫຼາຍຂະແໜງການ** ເຊັ່ນ: ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ແລະ ສະມາຊິກຄວນເຂົ້າຮ່ວມການສົນທະນາທາງດ້ານກົດໝາຍ ແລະ ນະໂຍບາຍກັບເຄືອຂ່າຍອື່ນໆ ທີ່ກ່ຽວຂ້ອງ ເຊັ່ນ: ເຄືອຂ່າຍບົດບາດຍິງ-ຊາຍຂອງລາວ ແລະ ເຄືອຂ່າຍອົງການຈັດຕັ້ງທາງສັງຄົມ.

ໝາຍເຫດ:

[1] ຊູຊາດ ໄຊຍະກຸມມາ, ຫົວໜ້າກົມປ່າໄມ້. https://laotiantimes.com/2020/05/28/laos-may-not-achieve-2020-target-of-70-percent-forest-cover/

[2] ແມ່ຍິງ ເຜົ່າ ກຶມມຸ ມີອາຊີບເຮັດໄຮ່ໝູນວຽນແມ່ນມີຄວາມຄຸ້ນເຄີຍກັບການຄຸ້ມຄອງປ່າໄມ້, ສ່ວນແມ່ຍິງເຜົ່າໄຕຂາວ ສ່ວນຫຼາຍແມ່ນເຮັດນາ.

## ກ່ຽວກັບກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ແມ່ນເຄືອຂ່າຍໜຶ່ງຂອງອົງການຈັດຕັ້ງທາງສັງຄົມທີ່ໄດ້ເກີດຂຶ້ນໃນ ສປປ ລາວ ນັບແຕ່ປີ 2007 ເປັນຕົ້ນມາ. ສະມາຊິກຂອງ LIWG ປະກອບມີ ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມ ລວມທັງສ່ວນບຸກຄົນທີ່ເຮັດວຽກດ້ານທີ່ດິນຢູ່ໃນ ສປປ ລາວ. ພາຍໃຕ້ກຸ່ມດັ່ງກ່າວ ປະກອບມີສະມາຊິກຫຼັກຫຼາຍກວ່າ 80 ທ່ານ ເຊິ່ງເປັນຕົວແທນຈາກອົງການຈັດຕັ້ງເກືອບ 40 ອົງການ ແລະ ສະມາຊິກສະໜັບສະໜູນແມ່ນມີ ຫຼາຍກວ່າ 180 ທ່ານ. ບັນດາກິດຈະກຳຕ່າງໆ ຂອງ LIWG ແມ່ນມີການດຳເນີນການໂດຍຜ່ານກອງເລຂາ ແລະ ຊີ້ນຳໂດຍຄະນະກຳມະການ ເຊິ່ງເປັນຄະນະທີ່ມາຈາກການລົງຄະແນນເລືອກຕັ້ງໂດຍບັນດາສະມາຊິກຂອງ LIWG. ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນໄດ້ສ້າງຕັ້ງຂຶ້ນເພື່ອວ່າບັນດາສະມາຊິກສາມາດສາມາດແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນໄດ້ກ່ຽວກັບປະເດັນເລື່ອງທີ່ດິນ ໂດຍສະເພາະແມ່ນປະເດັນທີ່ກຳລັງເກີດຂຶ້ນຢ່າງແຜ່ຫຼາຍ ທີ່ກ່ຽວຂ້ອງກັບບັນດາໂຄງການລົງທຶນໂດຍກົງຈາກຕ່າງປະເທດແລະ ຄວາມກັງວົນກ່ຽວກັບຜົນກະທົບດ້ານລົບຕໍ່ການດຳລົງຊີວິດ ຂອງບັນດາຊຸມຊົນໃນເຂດຊົນນະບົດ, ກໍ່ເພື່ອການລິເລີ່ມຮ່ວມກັນໃນການພັດທະນາ ຊ່ອງທາງການແກ້ໄຂບາງປະເດັນດັ່ງກ່າວນັ້ນ. ວຽກງານພື້ນຖານຂອງ LIWG ແມ່ນການຮ່ວມມືກັບຫຼາຍພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ອົງການຈັດຕັ້ງທາງສັງຄົມ, ພາກສ່ວນລັດຖະບານ, ບັນດາອົງການຄູ່ຮ່ວມພັດທະນາ, ຂະແໜງການເອກະຊົນ ແລະ ສິ່ງສຳຄັນແມ່ນບັນດາ ຊຸມຊົນທ້ອງຖິ່ນ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ LIWG, ກະລຸນາຕິດຕໍ່:

**ອີເມວ: Info@laolandinfo.org ໂທລະສັບ: +856 30 981 5657**
**ເວັບໄຊທ໌: www.laolandinfo.org ເຟກບຸກ: ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ**

**Website: www.laolandinfo.org Facebook: Land Information Working Group**

ບົດສັງລວມຫຍໍ້ນີ້ ແມ່ນບົດສະຫຼຸບຈາກກໍລະນີສຶກສາທີ່ໄດ້ຮັບມອບໝາຍໃນການສຶກສາໂດຍກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ດ້ວຍການຮ່ວມມືກັບຄະນະນິຕິສາດ ແລະ ອົງການ ຫ່ວງໃຍຮ່ວມໃຈພັດທະນາ. ກໍລະນີສຶກສາໄດ້ຮັບການສະໜັບສະໜູນທາງດ້ານການເງິນຈາກ Brot für die Welt (BfdW) ແລະ ໂຄງການບໍລິຫານລັດກ່ຽວກັບທີ່ດິນປະຈຳພາກພື້ນແມ່ນ້ຳຂອງ (MRLG).

ຂໍ້ມູນທີ່ນຳສະເໜີໃນບົດສັງລວມຫຍໍ້ນີ້ສະແດງໃຫ້ເຫັນເຖິງການປະຕິບັດ ແລະ ປະສົບການຂອງແມ່ຍິງ ແລະ ຜູ້ຊາຍໃນບ້ານທີ່ໄດ້ໄປສຶກສາ. ທັດສະນະທີ່ສະແດງອອກແມ່ນຂອງຜູ້ຂຽນ ແລະ ບໍ່ແມ່ນທັດສະນະຂອງຜູ້ໃຫ້ທຶນ ຫຼື ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ.

LIWG ສະໜອງຂໍ້ມູນນີ້ ຄືດັ່ງເປັນການບໍລິການສາທາລະນະ ເພື່ອຈຸດປະສົງດ້ານຂໍ້ມູນຂ່າວສານ ແລະ ການສຶກສາ, ໂດຍອີງໃສ່ຂໍ້ມູນທີ່ຜູ້ເຂົ້າຮ່ວມໃນກຸ່ມນີ້ເຫັນວ່າເປັນຂໍ້ມູນທີ່ເຊື່ອຖືໄດ້ ໂດຍບໍ່ມີສະຖານະທາງກົດໝາຍໃດໆ. ຄວາມຄິດເຫັນທີ່ສະແດງອອກໃນບົດສັງລວມຫຍໍ້ສະບັບນີ້ແມ່ນໄດ້ມາຈາກຄວາມຄິດ ແລະ ການເຮັດວຽກຮ່ວມກັນຂອງທີມງານ ແລະ ຖືກຮັບຮອງໂດຍກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ແຕ່ພຽງຜູ້ດຽວ.

ຮ່ວມມືກັບ:

ສະໜັບສະໜູນໂດຍ: